ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 21 /ລບ
ນະຄອນຫຼວງວຽງຈັນ 20.01.2021.

# ດຳລັດ
# ວ່າດ້ວຍການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ສະບັບເລກທີ 59/ສພຊ, ລົງວັນທີ 26 ທັນວາ 2014;
- ອີງຕາມ ໜັງສືສະເໜີ ຂອງກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 3488/ປກສ, ລົງວັນທີ 29 ທັນວາ 2020.

## ລັດຖະບານ ອອກດຳລັດ
## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ ກ່ຽວກັບ ອັດຕາປັບໃໝ ແລະ ມາດຕະການອື່ນ ຕໍ່ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ຈັດຕັ້ງປະຕິບັດ ການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດ ຢ່າງຖືກຕ້ອງ ແນໃສ່ເຮັດໃຫ້ການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ**

ການປັບໃໝ ແມ່ນ ມາດຕະການທາງດ້ານການເງິນ ທີ່ນຳໃຊ້ຕໍ່ຜູ້ລະເມີດທາງດ້ານບໍລິຫານ ກ່ຽວກັບ ການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ.

ການນຳໃຊ້ມາດຕະການອື່ນ ແມ່ນ ມາດຕະການເພີ່ມຈາກການປັບໃໝ ເປັນຕົ້ນ ການສຶກສາອົບຮົມ ກ່າວເຕືອນ, ດຳເນີນສອບຖາມເອົາຂໍ້ມູນເບື້ອງຕົ້ນ, ກັກຕົວ ຊາວສີ່ ຊົ່ວໂມງ, ຍຶດເອກະສານ, ວັດຖຸ, ເຄື່ອງຂອງ ແລະ ພາຫະນະທີ່ພົວພັນກັບ ການກະທຳຜິດ, ລຶບລ້າງການຂຶ້ນທະບຽນ ແລະ ບັດອະນຸຍາດພັກເຊົາ, ໂຈະ ຫຼື ຍຸບເລີກການດຳເນີນທຸລະກິດ ຫຼື ສະເໜີຂະແໜງການທີ່ກ່ຽວຂ້ອງ ຖອນໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ.

ສຳລັບ ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ນອກຈາກ ປັບໃໝ ແລະ ນຳໃຊ້ມາດຕະການອື່ນແລ້ວ ຍັງຈະຖືກສົ່ງອອກ ຈາກ ສປປ ລາວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການນຳໃຊ້ເອກະສານເດີນທາງບໍ່ຖືກຕ້ອງ** ໝາຍເຖິງ ການນຳໃຊ້ເອກະສານເດີນທາງຂອງບຸກຄົນອື່ນ, ປອມ, ປ່ຽນແປງ ຂໍ້ມູນບາງສ່ວນ, ບໍ່ຄົບຖ້ວນ ຫຼື ບໍ່ສົມບູນ ເພື່ອເດີນທາງເຂົ້າ-ອອກ ສປປ ລາວ;

2. **ການລົບຫຼີກການກວດກາ ຫຼື ບໍ່ປະທັບຕາແຈ້ງເຂົ້າ-ອອກ ຈາກເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານຊາຍແດນ** ໝາຍເຖິງ ການທີ່ບຸກຄົນເຂົ້າ-ອອກດ່ານຊາຍແດນ ແລະ ສະໜາມບິນສາກົນ ທີ່ທາງການກຳນົດໄວ້ ແຕ່ມີເຈດຕະນາ ຫຼື ເມີນເສີຍ ລົບຫຼີກການກວດກາ ຫຼື ບໍ່ປະທັບຕາແຈ້ງເຂົ້າ-ອອກ ຈາກເຈົ້າໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ;

3. **ການເຮັດວຽກບໍ່ຖືກເປົ້າໝາຍຕາມທີ່ທາງການກຳນົດ** ໝາຍເຖິງ ການບໍ່ເຮັດວຽກຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ເຈົ້າໜ້າທີ່ ແລະ ຂະແໜງການທີ່ກ່ຽວຂ້ອງອະນຸຍາດໃຫ້;

4. **ການເຂົ້າມາອອກແຮງງານ ໂດຍບໍ່ໄດ້ຮັບອະນຸຍາດ** ໝາຍເຖິງ ການລັກລອບອອກແຮງງານ ໂດຍບໍ່ມີວີຊາແຮງງານ, ບັດອະນຸຍາດເຮັດວຽກ ແລະ ບັດອະນຸຍາດພັກເຊົາ;

5. **ການເຊົ່າໃບອະນຸຍາດດຳເນີນທຸລະກິດ ໂດຍບໍ່ຖືກຕ້ອງ** ໝາຍເຖິງ ການເຊົ່າໃບອະນຸຍາດດຳເນີນທຸລະກິດຂອງບຸກຄົນ ຫຼື ນິຕິບຸກຄົນອື່ນ ເພື່ອດຳເນີນກິດຈະການທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ;

6. **ການໃຫ້ເຊົ່າໃບອະນຸຍາດດຳເນີນທຸລະກິດ ໂດຍບໍ່ຖືກຕ້ອງ** ໝາຍເຖິງ ການໃຫ້ ບຸກຄົນ, ນິຕິບຸກຄົນອື່ນເຊົ່າໃບອະນຸຍາດດຳເນີນທຸລະກິດຂອງຕົນ ເພື່ອດຳເນີນກິດຈະການທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ;

7. **ການເຂົ້າມາປະກອບອາຊີບຫາລາຍໄດ້ ໂດຍບໍ່ໄດ້ຮັບອະນຸຍາດ** ໝາຍເຖິງ ການເຂົ້າມາປະກອບອາຊີບ ເຊັ່ນ ຄ້າຂາຍຍ່ອຍ, ຮ້ານອາຫານ, ຕັດຫຍິບເຄື່ອງ, ເລາະຂາຍເຄື່ອງ ດ້ວຍການ ຫິ້ວຫາບ, ໃຊ້ລົດຖີບ ຫຼື ລົດຈັກເລາະກັບຊື້ເຄື່ອງເກົ່າ-ຂອງເສດ, ເລາະນວດ, ເສີມສວຍ, ຕັດເລັບ, ຊັ່ງນ້ຳໜັກກວດສຸຂະພາບ, ຮັບເໝົາກໍ່ສ້າງ, ສ້ອມແປງລົດ, ເຮັດເຝີນິເຈີ້ ແລະ ອື່ນໆ ເພື່ອຫາລາຍໄດ້ ໂດຍບໍ່ຖືກຕ້ອງຕາມ ກົດໝາຍ, ລະບຽບການ ແລະ ອາຊີບທີ່ລັດຖະບານສະຫງວນໄວ້ໃຫ້ພົນລະເມືອງລາວ ແຕ່ລະໄລຍະ;

8. **ການນຳເຂົ້າຜູ້ອອກແຮງງານຕ່າງປະເທດໂດຍບໍ່ມີການຄຸ້ມຄອງ ແລະ ນຳໃຊ້ບໍ່ຖືກຕ້ອງຕາມເປົ້າໝາຍທີ່ທາງການກຳນົດ** ໝາຍເຖິງ ການນຳເຂົ້າແຮງງານຕ່າງປະເທດ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ແຕ່ບໍ່ມີການຄຸ້ມຄອງຜູ້ອອກແຮງງານ, ການພັກເຊົາ, ການນຳໃຊ້ແຮງງານ ລວມທັງການນຳໃຊ້ແຮງງານທີ່ບໍ່ຖືກຕ້ອງຕາມເປົ້າໝາຍ;

9. **ການບໍ່ແຈ້ງການພັກເຊົາຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງ ສຳນັກງານ, ອົງການ, ໂຮງແຮມ, ເຮືອນພັກ, ໂຮງຈັກ, ໂຮງງານ ແລະ ສະຖານທີ່ພັກເຊົາອື່ນ ທີ່ບໍ່ແຈ້ງການມາພັກເຊົາ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຕໍ່ອົງການປົກຄອງທ້ອງຖິ່ນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

10. **ການກິນຢູ່ນຳກັນແບບຜົວເມຍ** ໝາຍເຖິງ ການດຳລົງຊີວິດຢູ່ກິນຮ່ວມກັນຂອງບຸກຄົນ ແບບຜົວເມຍ ໂດຍບໍ່ໄດ້ຈົດທະບຽນການແຕ່ງດອງ ໃຫ້ຖືກຕ້ອງຕາມກົດໝາຍ;

11. **ການເຈດຕະນາລີ້ຊ່ອນ ຢູ່ ສປປ ລາວ** ໝາຍເຖິງ ການພັກເຊົາ ຢູ່ ສປປ ລາວ ເກີນກຳນົດ ເກົ້າສິບວັນ ແຕ່ບໍ່ໄປຕໍ່ການອະນຸຍາດພັກເຊົານຳເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

12. **ຫ້າມເອົາວີຊາກັບດ່ານ** ໝາຍເຖິງ ການບໍ່ອະນຸຍາດໃຫ້ພົນລະເມືອງຂອງບັນດາປະເທດ ທີ່ກຳນົດຢູ່ໃນບັນຊີຫ້າມເອົາວີຊາກັບດ່ານ ຕາມແຈ້ງການຂອງກະຊວງການຕ່າງປະເທດ.

**ມາດຕາ 4 ຫຼັກການ ກ່ຽວກັບ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ**

ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
2. ຄຸ້ມຄອງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຕ້ອງສ້າງບົດບັນທຶກ;
4. ຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ.

## ໝວດທີ 2
## ອັດຕາການປັບໃໝ ແລະ ມາດຕະການອື່ນຕໍ່ຜູ້ລະເມີດ ກ່ຽວກັບ ການເຂົ້າ-ອອກ ສປປ ລາວ

**ມາດຕາ 6 ການລະເມີດການເຂົ້າ-ອອກ ສປປ ລາວ**

ພຶດຕິກຳ ທີ່ເປັນການລະເມີດ ກ່ຽວກັບ ການເຂົ້າ-ອອກ ສປປ ລາວ ມີດັ່ງນີ້:

1. ການເຂົ້າ-ອອກ ສປປ ລາວ ໂດຍບໍ່ມີເອກະສານເດີນທາງ;
2. ການເຂົ້າ-ອອກ ສປປ ລາວ ໂດຍນຳໃຊ້ເອກະສານເດີນທາງບໍ່ຖືກຕ້ອງ;
3. ການບໍ່ເຂົ້າ-ອອກ ຕາມດ່ານຊາຍແດນ ແລະ ສະໜາມບິນສາກົນ ທີ່ທາງການກຳນົດ;
4. ການນຳໃຊ້ປຶ້ມຜ່ານແດນ ແລະ ໃບຜ່ານແດນໄປເກີນຂອບເຂດ;
5. ການພັກເຊົາເກີນກຳນົດທີ່ທາງການອະນຸຍາດ;
6. ການຫຼົບຫຼີກການກວດກາ ຫຼື ບໍ່ປະທັບຕາແຈ້ງເຂົ້າ-ອອກ ຈາກເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກ ເມືອງປະຈຳດ່ານຊາຍແດນ ແລະ ສະໜາມບິນສາກົນ;
7. ການອຳນວຍຄວາມສະດວກ ຫຼື ຊ່ວຍເຫຼືອຄົນເຂົ້າ-ອອກ ສປປ ລາວ ໂດຍບໍ່ຖືກຕ້ອງ.

**ມາດຕາ 7 ການເຂົ້າ-ອອກ ສປປ ລາວ ໂດຍບໍ່ມີເອກະສານເດີນທາງ**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເດີນທາງເຂົ້າ-ອອກ ສປປ ລາວ ໂດຍບໍ່ມີເອກະສານເດີນທາງ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ ສອງລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;
2. ຄັ້ງທີສອງ ຈະຖືກປັບໃໝ ສາມລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;
3. ຄັ້ງທີສາມ ຈະຖືກປັບໃໝ ຫ້າລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້ ແລະ ຈະຖືກນຳໃຊ້ມາດຕະການອື່ນ ຕາມແຕ່ກໍລະນີ.

ສຳລັບ ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ນອກຈາກຖືກປັບໃໝແລ້ວ ຍັງຈະຖືກສົ່ງອອກຈາກ ສປປ ລາວ.

**ມາດຕາ 8 ການເຂົ້າ-ອອກ ສປປ ລາວ ໂດຍນຳໃຊ້ເອກະສານເດີນທາງບໍ່ຖືກຕ້ອງ**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເດີນທາງເຂົ້າ-ອອກ ສປປ ລາວ ໂດຍນຳໃຊ້ເອກະສານເດີນທາງບໍ່ຖືກຕ້ອງ ຈະຖືກປັບໃໝ ແຕ່ ເຈັດລ້ານກີບ ຫາ ສິບສອງລ້ານກີບ ຕໍ່ຄົນ ຕໍ່ຄັ້ງ ພ້ອມທັງເຮັດບົດບັນທຶກໄວ້ ແລະ ນຳໃຊ້ມາດຕະການອື່ນ ຕາມແຕ່ກໍລະນີ.

ສຳລັບ ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ນອກຈາກຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນແລ້ວ ຍັງຈະຖືກສົ່ງອອກ ແລະ ຫ້າມເຂົ້າ ສປປ ລາວ.

**ມາດຕາ 9 ການບໍ່ເຂົ້າ-ອອກຕາມດ່ານຊາຍແດນ ແລະ ສະໜາມບິນສາກົນ ທີ່ທາງການກຳນົດ**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເດີນທາງເຂົ້າ-ອອກ ສປປ ລາວ ຫາກບໍ່ເຂົ້າ-ອອກ ຕາມດ່ານຊາຍແດນ ແລະ ສະໜາມບິນສາກົນ ທີ່ທາງການກຳນົດໄວ້ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ ສອງລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;
2. ຄັ້ງທີສອງ ຈະຖືກປັບໃໝ ສາມລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;
3. ຄັ້ງທີສາມ ຈະຖືກປັບໃໝ ສີ່ລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້ ແລະ ຈະຖືກນຳໃຊ້ມາດຕະການອື່ນ ຕາມແຕ່ກໍລະນີ.

ສຳລັບ ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ນອກຈາກຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນແລ້ວ ຍັງຈະຖືກສົ່ງອອກ ແລະ/ຫຼື ຫ້າມເຂົ້າ ສປປ ລາວ.

**ມາດຕາ 10 ການນຳໃຊ້ປຶ້ມຜ່ານແດນ ຫຼື ໃບຜ່ານແດນ ໄປເກີນຂອບເຂດ**

ຄົນຕ່າງປະເທດ ທີ່ນຳໃຊ້ປຶ້ມຜ່ານແດນ ຫຼື ໃບຜ່ານແດນ ໄປເກີນຂອບເຂດ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ ໜຶ່ງລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;
2. ຄັ້ງທີສອງ ຈະຖືກປັບໃໝ ສອງລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;
3. ຄັ້ງທີສາມ ຈະຖືກປັບໃໝ ສາມລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້ ແລະ ຈະຖືກສົ່ງອອກ ແລະ ຫ້າມເຂົ້າ ສປປ ລາວ.

**ມາດຕາ 11 ການພັກເຊົາເກີນກຳນົດ ທີ່ທາງການອະນຸຍາດ**

ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຫາກພັກເຊົາເກີນກຳນົດ ທີ່ທາງການອະນຸຍາດໃຫ້ ໃນເອກະສານເດີນທາງຕາມປະເພດ ວີຊາຜ່ານ, ວີຊາທ່ອງທ່ຽວ, ວີຊາໄລຍະສັ້ນ, ວີຊາໄລຍະຍາວ, ຍົກເວັ້ນວີຊາ ຂອງວຽກງານເຂົ້າ-ອອກເມືອງຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຜູ້ທີ່ນຳໃຊ້ໜັງສືຜ່ານແດນ ຈະຖືກປັບໃໝ ໜຶ່ງແສນກີບ ຕໍ່ວັນ ພ້ອມທັງເຮັດບົດບັນທຶກໄວ້;
2. ຜູ້ທີ່ນຳໃຊ້ປຶ້ມຜ່ານແດນ ຫຼື ໃບຜ່ານແດນ ຈະຖືກປັບໃໝ ຫ້າສິບພັນກີບ ຕໍ່ວັນ ພ້ອມທັງເຮັດບົດບັນທຶກໄວ້.

**ມາດຕາ 12 ການຫຼົບຫຼີກການກວດກາ ຫຼື ບໍ່ປະທັບຕາແຈ້ງເຂົ້າ-ອອກ ຈາກເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງປະຈຳດ່ານຊາຍແດນ ແລະ ສະໜາມບິນສາກົນ**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເດີນທາງເຂົ້າ-ອອກ ສປປ ລາວ ໂດຍຜ່ານດ່ານຊາຍແດນ ແລະ ສະໜາມບິນສາກົນ ທີ່ທາງການກຳນົດໄວ້ ແຕ່ມີເຈດຕະນາເມີນເສີຍ ຫຼົບຫຼີກການກວດກາ ຫຼື ບໍ່ປະທັບຕາແຈ້ງເຂົ້າ-ອອກ ຈາກເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງປະຈຳດ່ານຊາຍແດນ ແລະ ສະໜາມບິນສາກົນ ຈະຖືກປັບໃໝ ສອງລ້ານກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້ ແລະ ສຶກສາອົບຮົມ.

ສຳລັບ ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ນອກຈາກຖືກປັບໃໝ ແລະ ສຶກສາອົບຮົມແລ້ວ ຍັງຈະຖືກສົ່ງອອກ ແລະ/ຫຼື ຫ້າມເຂົ້າ ສປປ ລາວ.

**ມາດຕາ 13 ການອຳນວຍຄວາມສະດວກ ຫຼື ຊ່ວຍເຫຼືອຄົນເຂົ້າ-ອອກ ສປປ ລາວ ໂດຍບໍ່ຖືກຕ້ອງ**

ການອຳນວຍຄວາມສະດວກ ຫຼື ຊ່ວຍເຫຼືອ ໃຫ້ບຸກຄົນອື່ນ ເຂົ້າ-ອອກ ສປປ ລາວ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ນິຕິບຸກຄົນ ຫາກນຳເອົາຜູ້ໂດຍສານ ທີ່ເປັນພົນລະເມືອງຂອງບັນດາປະເທດຫ້າມເອົາວິຊາກັບດ່ານ ຕາມແຈ້ງການຂອງກະຊວງການຕ່າງປະເທດແຕ່ລະໄລຍະ ແລະ ບໍ່ທັນໄດ້ຮັບວິຊາເຂົ້າ ສປປ ລາວ ມານຳຖ້ຽວບິນ ຈະຖືກປັບໃໝ ສາມລ້ານກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;

2. ນິຕິບຸກຄົນ ຫາກນຳເອົາຜູ້ໂດຍສານ ທີ່ນຳໃຊ້ໜັງສືຜ່ານແດນທີ່ມີອາຍຸການນຳໃຊ້ຕໍ່າກວ່າ ໜຶ່ງຮ້ອຍແປດສິບ ວັນ ເຂົ້າມາ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຈະຖືກປັບໃໝ ສາມລ້ານກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;

3. ນິຕິບຸກຄົນ ຫາກນຳເອົາຜູ້ໂດຍສານ ທີ່ບໍ່ມີລາຍຊື່ຢູ່ໃນບັນຊີຂຶ້ນເຮືອບິນ ຂອງຖ້ຽວບິນທີ່ເຂົ້າມາ ສປປ ລາວ ຈະຖືກປັບໃໝ ສິບລ້ານກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;

4. ບຸກຄົນ ແລະ ນິຕິບຸກຄົນ ຫາກອຳນວຍຄວາມສະດວກ ຫຼື ໃຫ້ການຊ່ວຍເຫຼືອບຸກຄົນອື່ນ ໃນການນຳໃຊ້ເອກະສານເດີນທາງທີ່ບໍ່ຖືກຕ້ອງ ເຂົ້າ-ອອກ ສປປ ລາວ ຈະຖືກປັບໃໝ ສິບຫ້າລ້ານກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້

5. ບຸກຄົນ ແລະ ນິຕິບຸກຄົນ ຫາກເຈດຕະນາອຳນວຍຄວາມສະດວກ ໃຫ້ບຸກຄົນອື່ນ ເຂົ້າ-ອອກ ສປປ ລາວ ໂດຍບໍ່ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ ໂດຍນຳໃຊ້ ຫຼື ບໍ່ນຳໃຊ້ ພາຫະນະອື່ນ ຈະຖືກປັບໃໝ ສິບຫ້າລ້ານກີບ ຕໍ່ຄົນພ້ອມທັງເຮັດບົດບັນທຶກໄວ້.

ໃນກໍລະນີ ບຸກຄົນ, ນິຕິບຸກຄົນ ຫາກໄດ້ລະເມີດຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 1 ຫາ ຂໍ້ທີ 5 ຂອງມາດຕານີ້ ສອງຄັ້ງ ຂຶ້ນໄປ ຈະຖືກປັບໃໝ ສອງເທົ່າ ຂອງການລະເມີດ ພ້ອມທັງເຮັດບົດບັນທຶກໄວ້ ແລະ ຈະຖືກນຳໃຊ້ມາດຕະການອື່ນ ຕາມແຕ່ລະກໍລະນີ.

## ໝວດທີ 3
## ອັດຕາການປັບໃໝ ແລະ ມາດຕະການອື່ນ
## ຕໍ່ຜູ້ລະເມີດ ກ່ຽວກັບການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ

**ມາດຕາ 14 ການລະເມີດ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ**

ພຶດຕິກຳ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ມີ ດັ່ງນີ້:

1. ການພັກເຊົາເກີນກຳນົດ ທີ່ທາງການອະນຸຍາດໃຫ້;
2. ການເຮັດວຽກບໍ່ຖືກຕາມເປົ້າໝາຍທີ່ທາງການກຳນົດ;
3. ການເຂົ້າມາດຳເນີນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດ;
4. ການເຂົ້າມາອອກແຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;
5. ການເຊົ່າໃບອະນຸຍາດດຳເນີນທຸລະກິດໂດຍບໍ່ຖືກຕ້ອງ;
6. ການໃຫ້ເຊົ່າໃບອະນຸຍາດດຳເນີນທຸລະກິດໂດຍບໍ່ຖືກຕ້ອງ;
7. ການເຂົ້າມາປະກອບອາຊີບຫາລາຍໄດ້ໂດຍບໍ່ໄດ້ຮັບອະນຸຍາດ;
8. ການຮັບເອົາຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ເຂົ້າເຮັດວຽກ ໂດຍບໍ່ຖືກຕ້ອງ;
9. ການບໍ່ແຈ້ງ ການພັກເຊົາ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

10. ການນຳເຂົ້າຜູ້ອອກແຮງງານຕ່າງປະເທດ ໂດຍບໍ່ມີການຄຸ້ມຄອງ ແລະ ນຳໃຊ້ບໍ່ຖືກຕ້ອງຕາມເປົ້າໝາຍທີ່ທາງການກຳນົດ;

11. ການສ້າງຄອບຄົວ ຫຼື ຢູ່ກິນນຳກັນແບບຜົວເມຍ ຫຼື ແຕ່ງດອງໂດຍບໍ່ຈົດທະບຽນຄອບຄົວ ຢ່າງຖືກຕ້ອງ;

12. ການເຈດຕະນາລີ້ຊ່ອນ ຢູ່ ສປປ ລາວ;

13. ການອຳນວຍຄວາມສະດວກ, ໃຫ້ທີ່ພັກເຊົາ ຫຼື ຊຸກເຊື່ອງ ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ທີ່ລະເມີດກົດໝາຍ ແລະ ລະບຽບການ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ.

**ມາດຕາ 15 ການພັກເຊົາເກີນກຳນົດ ທີ່ທາງການອະນຸຍາດໃຫ້**

ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ພັກເຊົາເກີນກຳນົດ ທີ່ທາງການອະນຸຍາດໃຫ້ ຕາມປະເພດ ວີຊາການທູດ, ວີຊາລັດຖະການ, ວີຊາຜົວຫຼືເມຍ, ວີຊາອັດທະຍາໄສ, ວີຊາຊ່ຽວຊານ, ວີຊາທຸລະກິດ, ວີຊານັກສຶກສາ, ວີຊານັກຂ່າວ ແລະ ວີຊາແຮງງານ ຈະຖືກປັບໃໝ ໜຶ່ງແສນ ກີບ ຕໍ່ວັນ ພ້ອມທັງເຮັດບົດບັນທຶກໄວ້ ແລະ ຈະຖືກນຳໃຊ້ມາດຕະການອື່ນ ຕາມແຕ່ກໍລະນີ.

**ມາດຕາ 16 ການເຮັດວຽກບໍ່ຖືກຕາມເປົ້າໝາຍທີ່ທາງການກຳນົດ**

ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຮັດວຽກບໍ່ຖືກຕາມເປົ້າໝາຍທີ່ທາງການກຳນົດ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ ສອງລ້ານກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;
2. ຄັ້ງທີສອງ ຈະຖືກປັບໃໝ ສາມລ້ານກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;
3. ຄັ້ງທີສາມ ຈະຖືກປັບໃໝ ຫ້າລ້ານກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້, ລຶບລ້າງການຂຶ້ນທະບຽນ, ບັດອະນຸຍາດພັກເຊົາ ແລະ ຈະຖືກສົ່ງອອກ ແລະ ຫ້າມເຂົ້າ ສປປ ລາວ.

**ມາດຕາ 17 ການເຂົ້າມາດຳເນີນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດ**

ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຂົ້າມາດຳເນີນທຸລະກິດ ໂດຍບໍ່ໄດ້ຂຶ້ນທະບຽນວິສາຫະກິດ ຫຼື ບໍ່ມີໃບອະນຸຍາດດຳເນີນທຸລະກິດ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ ສີ່ລ້ານ ກີບ ພ້ອມທັງເຮັດບົດບັນທຶກໄວ້;
2. ຄັ້ງທີສອງ ຈະຖືກປັບໃໝ ເຈັດລ້ານ ກີບ ພ້ອມທັງເຮັດບົດບັນທຶກໄວ້ ແລະ ໂຈະການດຳເນີນທຸລະກິດ;
3. ຄັ້ງທີສາມ ຈະຖືກປັບໃໝ ສິບລ້ານ ກີບ ພ້ອມທັງເຮັດບົດບັນທຶກໄວ້ ແລະ ຍຸບເລີກການດຳເນີນທຸລະກິດ ແລະ ຈະຖືກສົ່ງອອກ ແລະ ຫ້າມເຂົ້າ ສປປ ລາວ.

**ມາດຕາ 18 ການເຂົ້າມາອອກແຮງງານ ໂດຍບໍ່ໄດ້ຮັບອະນຸຍາດ**

ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຂົ້າມາອອກແຮງງານ ຢູ່ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ ໜຶ່ງລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;
2. ຄັ້ງທີສອງ ຈະຖືກປັບໃໝ ສອງລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;
3. ຄັ້ງທີສາມ ຈະຖືກປັບໃໝ ສາມລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້ ແລະ ຈະຖືກສົ່ງອອກ ແລະ ຫ້າມເຂົ້າ ສປປ ລາວ.

**ມາດຕາ 19 ການເຊົ່າໃບອະນຸຍາດດຳເນີນທຸລະກິດ ໂດຍບໍ່ຖືກຕ້ອງ**

ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຫາກເຊົ່າໃບອະນຸຍາດດຳເນີນທຸລະກິດ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໂດຍບໍ່ຖືກຕ້ອງ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ ຫ້າລ້ານ ກີບ ພ້ອມທັງເຮັດບົດບັນທຶກໄວ້;

2. ຄັ້ງທີສອງ ຈະຖືກປັບໃໝ ສິບລ້ານ ກີບ ພ້ອມທັງເຮັດບົດບັນທຶກໄວ້ ແລະ ຈະຖືກສົ່ງອອກ ແລະ ຫ້າມເຂົ້າ ສປປ ລາວ.

**ມາດຕາ 20 ການໃຫ້ເຊົ່າໃບອະນຸຍາດດຳເນີນທຸລະກິດ ໂດຍບໍ່ຖືກຕ້ອງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ເຊົ່າໃບອະນຸຍາດດຳເນີນທຸລະກິດໂດຍບໍ່ຖືກຕ້ອງ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ ສີ່ລ້ານ ກີບ ພ້ອມທັງເຮັດບົດບັນທຶກໄວ້;

2. ຄັ້ງທີສອງ ຈະຖືກປັບໃໝ ເຈັດລ້ານ ກີບ ພ້ອມທັງເຮັດບົດບັນທຶກໄວ້;

3. ຄັ້ງທີສາມ ຈະຖືກປັບໃໝ ສິບລ້ານ ກີບ ພ້ອມທັງເຮັດບົດບັນທຶກໄວ້ ແລະ ສະເໜີຂະແໜງການທີ່ກ່ຽວຂ້ອງ ຖອນໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ.

**ມາດຕາ 21 ການເຂົ້າມາປະກອບອາຊີບຫາລາຍໄດ້ ໂດຍບໍ່ໄດ້ຮັບອະນຸຍາດ**

ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຂົ້າມາປະກອບອາຊີບຫາລາຍໄດ້ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຫຼື ອາຊີບທີ່ລັດຖະບານສະຫງວນໄວ້ໃຫ້ພົນລະເມືອງລາວ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ ໜຶ່ງລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;

2. ຄັ້ງທີສອງ ຈະຖືກປັບໃໝ ສອງລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;

3. ຄັ້ງທີສາມ ຈະຖືກປັບໃໝ ຫ້າລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້, ຖືກນຳໃຊ້ມາດຕະການອື່ນຕາມແຕ່ກໍລະນີ ແລະ ຈະຖືກສົ່ງອອກ ແລະ ຫ້າມເຂົ້າ ສປປ ລາວ.

**ມາດຕາ 22 ການຮັບເອົາຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ເຂົ້າເຮັດວຽກ ໂດຍບໍ່ຖືກຕ້ອງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເອົາຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ເຂົ້າມາເຮັດວຽກ ໂດຍບໍ່ມີວີຊາແຮງງານ, ບັດອະນຸຍາດເຮັດວຽກ ແລະ ບັດອະນຸຍາດພັກເຊົາ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ ສອງລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;

2. ຄັ້ງທີສອງ ຈະຖືກປັບໃໝ ສີ່ລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;

3. ຄັ້ງທີສາມ ຈະຖືກປັບໃໝ ຫົກລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້ ແລະ ສະເໜີຂະແໜງການທີ່ກ່ຽວຂ້ອງ ລົບລ້າງໃບອະນຸຍາດດຳເນີນທຸລະກິດ ແລະ ຈະຖືກສົ່ງອອກ ແລະ ຫ້າມເຂົ້າ ສປປ ລາວ.

**ມາດຕາ 23 ການບໍ່ແຈ້ງການພັກເຊົາ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງ ເຄຫະສະຖານ, ສະຖານທີ່ພັກເຊົາ ຫາກບໍ່ແຈ້ງການພັກເຊົາ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຈະຖືກປັບໃໝ ຫ້າແສນກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້ ແລະ ສຶກສາອົບຮົມ.

**ມາດຕາ 24 ການນຳເຂົ້າຜູ້ອອກແຮງງານຕ່າງປະເທດ ໂດຍບໍ່ມີການ ຄຸ້ມຄອງ ແລະ ນຳໃຊ້ ບໍ່ຖືກຕ້ອງຕາມເປົ້າໝາຍທີ່ທາງການກຳນົດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ນຳເຂົ້າຜູ້ອອກແຮງງານຕ່າງປະເທດແລ້ວ ແຕ່ບໍ່ມີການຄຸ້ມຄອງ ແລະ ນຳໃຊ້ບໍ່ຖືກຕ້ອງຕາມເປົ້າໝາຍ ທີ່ທາງການກຳນົດ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ ສາມລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;

2. ຄັ້ງທີສອງ ຈະຖືກປັບໃໝ ຫົກລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້;

3. ຄັ້ງທີສາມ ຈະຖືກປັບໃໝ ເກົ້າລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້ ແລະ ສະເໜີຂະແໜງການກ່ຽວຂ້ອງ ຖອນໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ.

**ມາດຕາ 25 ການສ້າງຄອບຄົວ ຫຼື ຢູ່ກິນນຳກັນແບບຜົວເມຍ ຫຼື ແຕ່ງດອງໂດຍບໍ່ໄດ້ຈົດທະບຽນແຕ່ງດອງ ຢ່າງຖືກຕ້ອງ**

ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຫາກສ້າງຄອບຄົວ ຫຼື ຢູ່ກິນນຳກັນແບບຜົວເມຍ ຫຼື ແຕ່ງດອງ ກັບພົນລະເມືອງລາວ ໂດຍບໍ່ຈົດທະບຽນແຕ່ງດອງ ຢ່າງຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ ສີ່ລ້ານ ກີບ ຕໍ່ຄູ່ ພ້ອມທັງເຮັດບົດບັນທຶກໄວ້;
2. ຄັ້ງທີສອງ ຈະຖືກປັບໃໝ ຫົກລ້ານ ກີບ ຕໍ່ຄູ່ ພ້ອມທັງເຮັດບົດບັນທຶກໄວ້;
3. ຄັ້ງທີສາມ ຈະຖືກປັບໃໝ ແປດລ້ານ ກີບ ຕໍ່ຄູ່ ພ້ອມທັງເຮັດບົດບັນທຶກໄວ້ ແລະ ຈະຖືກນຳໃຊ້ມາດຕະການອື່ນ ຕາມແຕ່ກໍລະນີ.

ສຳລັບຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ນອກຈາກຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນແລ້ວ ຍັງຈະຖືກລຶບລ້າງການຂຶ້ນທະບຽນ ແລະ ບັດອະນຸຍາດພັກເຊົາ ລວມທັງຈະຖືກສົ່ງອອກຈາກ ສປປ ລາວ.

**ມາດຕາ 26 ການເຈດຕະນາລີ້ຊ່ອນ ຢູ່ ສປປ ລາວ**

ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຫາກມີເຈດຕະນາລີ້ຊ່ອນ ຢູ່ ສປປ ລາວ ຈະຖືກປັບໃໝ ຊາວລ້ານ ກີບ ຕໍ່ຄົນ ພ້ອມທັງເຮັດບົດບັນທຶກໄວ້ ແລະ ຈະຖືກສົ່ງອອກ ແລະ ຫ້າມເຂົ້າ ສປປ ລາວ.

**ມາດຕາ 27 ການອຳນວຍຄວາມສະດວກ, ໃຫ້ທີ່ພັກເຊົາ ຫຼື ຊຸກເຊື່ອງ ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ອຳນວຍຄວາມສະດວກ, ໃຫ້ທີ່ພັກເຊົາ ຫຼື ຊຸກເຊື່ອງຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ຈະຖືກປັບໃໝແຕ່ ສອງລ້ານ ກີບ ຫາ ສິບລ້ານ ກີບ ຕໍ່ຄົນ ຕໍ່ຄັ້ງ ພ້ອມທັງເຮັດບົດບັນທຶກໄວ້ ແລະ ສຶກສາອົບຮົມ.

ສຳລັບ ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ນອກຈາກຖືກປັບໃໝ ແລະ ສຶກສາອົບຮົມແລ້ວ ຍັງຈະຖືກລຶບລ້າງການຂຶ້ນທະບຽນ ແລະ ບັດອະນຸຍາດພັກເຊົາ ແລະ ຈະຖືກສົ່ງອອກຈາກ ສປປ ລາວ.

## ໝວດທີ 4
## ການຈັດຕັ້ງປະຕິບັດ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ

**ມາດຕາ 28 ການຈັດຕັ້ງປະຕິບັດ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ**

ຂະແໜງການປ້ອງກັນຄວາມສະຫງົບ ເປັນຜູ້ຈັດຕັ້ງປະຕິບັດ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ແລະ ຈັດຕັ້ງເຜີຍແຜ່ ຢ່າງກວ້າງຂວາງ ແລະ ທົ່ວເຖິງ ເພື່ອໃຫ້ສັງຄົມມີສ່ວນຮ່ວມໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

1. ຂັ້ນກະຊວງ ແມ່ນ ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ແລະ ກົມຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ທີ່ຂຶ້ນກັບກົມໃຫຍ່ສັນຕິບານ;
2. ຂັ້ນແຂວງ ແມ່ນ ພະແນກຕຳຫຼວດກວດຄົນເຂົ້າ-ອອກເມືອງ ແລະ ພະແນກຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ທີ່ຂຶ້ນກັບຫ້ອງສັນຕິບານ ຫຼື ເຈົ້າໜ້າທີ່ຕຳຫຼວດ ທີ່ໄດ້ຖືກມອບໝາຍ;
3. ຂັ້ນເມືອງ ແມ່ນ ໜ່ວຍງານຕຳຫຼວດກວດຄົນເຂົ້າ-ອອກເມືອງ ແລະ ໜ່ວຍງານຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ທີ່ຂຶ້ນກັບພະແນກສັນຕິບານ ຫຼື ເຈົ້າໜ້າທີ່ຕຳຫຼວດ ທີ່ໄດ້ຖືກມອບໝາຍ;

4. ດ່ານທຸກປະເພດ.

## ມາດຕາ 29 ສິດ ແລະ ໜ້າທີ່ ຂອງກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ

ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການເຂົ້າ-ອອກ ສປປ ລາວ;

2. ກຳນົດແບບພິມບົດບັນທຶກການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການເຂົ້າ-ອອກ ສປປ ລາວ;

3. ປັບໃໝຕໍ່ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ການເຂົ້າ-ອອກ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7, 8, 9, 10, 11, 12 ແລະ 13 ຂອງດຳລັດສະບັບນີ້;

4. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດຂອງເຈົ້າໜ້າທີ່ ກວດຄົນເຂົ້າ-ອອກເມືອງ ໃນຂອບເຂດທົ່ວປະເທດ;

5. ດຳເນີນການສົ່ງຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ການເຂົ້າ-ອອກ ສປປ ລາວ ອອກຈາກ ສປປ ລາວ;

6. ຂຶ້ນບັນຊີ ແລະ ຄຸ້ມຄອງບັນຊີ ບຸກຄົນຫ້າມເຂົ້າ ສປປ ລາວ ທີ່ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບ ການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ;

7. ກັກຕົວ, ດຳເນີນການສອບຖາມເອົາຂໍ້ມູນຫຼັກຖານເບື້ອງຕົ້ນ ພາຍໃນກຳນົດ ຊາວສີ່ ຊົ່ວໂມງ;

8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ;

9. ສະຫຼຸບ, ສັງລວມ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ກ່ຽວກັບ ການເຂົ້າ-ອອກ ສປປ ລາວ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ມາດຕາ 30 ສິດ ແລະ ໜ້າທີ່ ຂອງກົມຕຳຫຼວດຄຸ້ມຄອງຄົນຕ່າງປະເທດ

ກົມຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ;

2. ກຳນົດແບບພິມບົດບັນທຶກການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ;

3. ປັບໃໝ ຕໍ່ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 15, 16, 17, 18, 19, 20, 21, 22, 23, 24, 25, 26 ແລະ 27 ຂອງດຳລັດສະບັບນີ້;

4. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດຂອງເຈົ້າໜ້າທີ່ຄຸ້ມຄອງຄົນຕ່າງປະເທດ ໃນຂອບເຂດທົ່ວປະເທດ;

5. ດຳເນີນການສົ່ງຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ອອກຈາກ ສປປ ລາວ;

6. ຂຶ້ນບັນຊີ ແລະ ແຈ້ງບັນຊີ ກ່ຽວກັບ ການລະເມີດກົດໝາຍ ແລະ ລະບຽບການ ຄຸ້ມຄອງຄົນຕ່າງປະເທດໃຫ້ກົມກອງທີ່ກ່ຽວຂ້ອງ;

7. ກັກຕົວ, ດຳເນີນການສອບຖາມເອົາຂໍ້ມູນຫຼັກຖານເບື້ອງຕົ້ນ ພາຍໃນກຳນົດ ຊາວສີ່ ຊົ່ວໂມງ;

8. ປະສານສົມທົບກັບພາກສ່ວນ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ;

9. ສະຫຼຸບ, ສັງລວມ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ກ່ຽວກັບ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງພະແນກຕຳຫຼວດກວດຄົນເຂົ້າ-ອອກເມືອງ ປກສ ຂັ້ນ ແຂວງ**

ພະແນກຕຳຫຼວດກວດຄົນເຂົ້າ-ອອກເມືອງ ປກສ ຂັ້ນ ແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການເຂົ້າ-ອອກ ສປປ ລາວ;

2. ປັບໃໝ ຕໍ່ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ການເຂົ້າ-ອອກ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7, 8, 9, 10, 11, 12 ແລະ 13 ຂອງດຳລັດສະບັບນີ້;

3. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ຂອງເຈົ້າໜ້າທີ່ ກວດຄົນເຂົ້າ-ອອກເມືອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ດຳເນີນການສົ່ງຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການເຂົ້າ-ອອກ ສປປ ລາວ ອອກຈາກ ສປປ ລາວ ຕາມການຕົກລົງເຫັນດີ ຂອງກອງບັນຊາການ ປກສ ຂັ້ນ ແຂວງ ແລະ ລາຍງານໃຫ້ກະຊວງຮັບຊາບ;

5. ສັງລວມ ແລະ ແຈ້ງ ເປົ້າໝາຍ ບຸກຄົນຫ້າມເຂົ້າ ສປປ ລາວ ໃຫ້ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ;

6. ກັກຕົວ, ດຳເນີນການສອບຖາມເອົາ ຂໍ້ມູນຫຼັກ ຖານເບື້ອງຕົ້ນ ພາຍໃນກຳນົດ ຊາວສີ່ ຊົ່ວໂມງ ພ້ອມທັງແຈ້ງໃຫ້ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ຮັບຊາບ;

7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ;

8. ສະຫຼຸບ, ສັງລວມ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ກ່ຽວກັບເຂົ້າ-ອອກ ສປປ ລາວ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງພະແນກຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ປກສ ຂັ້ນ ແຂວງ**

ພະແນກກົມຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ປກສ ຂັ້ນ ແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ;

2. ປັບໃໝ ຕໍ່ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 15, 16, 17, 18, 19, 20, 21, 22, 23, 24, 25, 26 ແລະ 27 ຂອງດຳລັດສະບັບນີ້;

3. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ການລະເມີດ ຂອງເຈົ້າໜ້າທີ່ຄຸ້ມຄອງຄົນຕ່າງປະເທດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ດຳເນີນການສົ່ງຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ກ່ຽວກັບການຄຸ້ມຄອງຄົນຕ່າງປະເທດ ອອກຈາກ ສປປ ລາວ ຕາມການຕົກລົງເຫັນດີ ຂອງກອງບັນຊາການ ປກສ ຂັ້ນ ແຂວງ ແລະ ລາຍງານໃຫ້ກະຊວງຮັບຊາບ;

5. ສັງລວມ ແລະ ແຈ້ງເປົ້າໝາຍ ບຸກຄົນຫ້າມເຂົ້າ ສປປ ລາວ ໃຫ້ຂັ້ນເທິງຂອງຕົນ;

6. ກັກຕົວ, ດຳເນີນການສອບຖາມເອົາ ຂໍ້ມູນ ຫຼັກຖານເບື້ອງຕົນ ພາຍໃນກຳນົດ ຊາວສີ່ ຊົ່ວໂມງ;

7. ປະສານກັບຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດມາດຕະການ ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ;

8. ສະຫຼຸບ, ສັງລວມ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ການປັບໃໝ ແລະ ມາດຕະການອື່ນ ກ່ຽວກັບ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 33 ສິດ ແລະ ໜ້າທີ່ ຂອງໜ່ວຍງານຕຳຫຼວດກວດຄົນເຂົ້າ-ອອກເມືອງ ປກສ ຂັ້ນ ເມືອງ**

ໜ່ວຍງານຕຳຫຼວດກວດຄົນເຂົ້າ-ອອກເມືອງ ປກສ ຂັ້ນ ເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການເຂົ້າ-ອອກ ສປປ ລາວ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ປັບໃໝ ຕໍ່ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການເຂົ້າ-ອອກ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8, 9, 10, 11, 12 ແລະ 13 ຂອງດຳລັດສະບັບນີ້;

3. ກັກຕົວ, ດຳເນີນການສອບຖາມເອົາ ຂໍ້ມູນ ຫຼັກຖານເບື້ອງຕົ້ນ ພາຍໃນ ຊາວສີ່ ຊົ່ວໂມງ ພ້ອມທັງລາຍງານ ແລະ ສົ່ງໃຫ້ ກອງບັນຊາການ ປກສ ຂັ້ນ ແຂວງ ເພື່ອແກ້ໄຂຕາມລະບຽບການ;

4. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ;

5. ສະຫຼຸບ, ສັງລວມ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ການປັບໃໝ ແລະ ມາດຕະການອື່ນ ກ່ຽວກັບ ການເຂົ້າ-ອອກ ສປປ ລາວ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 34 ສິດ ແລະ ໜ້າທີ່ຂອງໜ່ວຍງານຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ປກສ ຂັ້ນ ເມືອງ**

ໜ່ວຍງານຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ປກສ ຂັ້ນ ເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ປັບໃໝ ຕໍ່ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການຄຸ້ມຄອງຄົນຕ່າງປະເທດ ຕາມທີ່ກຳນົດໄວ້ໃນ ມາດຕາ 15, 16, 17, 18, 19, 20, 21, 22, 23, 24ແລະ 27 ຂອງດຳລັດສະບັບນີ້;

3. ກັກຕົວ, ດຳເນີນການສອບຖາມເອົາ ຂໍ້ມູນ ຫຼັກຖານເບື້ອງຕົ້ນ ພາຍໃນ ຊາວສີ່ ຊົ່ວໂມງ ພ້ອມທັງລາຍງານ ແລະ ສົ່ງໃຫ້ ກອງບັນຊາການ ປກສ ຂັ້ນ ແຂວງ ເພື່ອແກ້ໄຂຕາມລະບຽບການ;

4. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ;

5. ສະຫຼຸບ, ສັງລວມ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານການປັບໃໝ ແລະ ມາດຕະການອື່ນ ກ່ຽວກັບ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 35 ສິດ ແລະ ໜ້າທີ່ຂອງ ດ່ານກວດຄົນເຂົ້າ-ອອກເມືອງ**

ດ່ານກວດຄົນເຂົ້າ-ອອກເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການເຂົ້າ-ອອກ ສປປ ລາວ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ປັບໃໝ ຕໍ່ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການເຂົ້າ-ອອກ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7, 8, 9, 10, 11, 12 ແລະ ຂໍ້ 2, 3, 4 ມາດຕາ 13 ຂອງດຳລັດສະບັບນີ້;

3. ດຳເນີນການສົ່ງຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການເຂົ້າ-ອອກ ສປປ ລາວ ອອກຈາກ ສປປ ລາວ ຕາມການຕົກລົງເຫັນດີຂອງຂັ້ນເທິງ;

4. ເກັບກຳຂໍ້ມູນ ແລະ ຄຸ້ມຄອງບັນຊີ ບຸກຄົນຫ້າມເຂົ້າ ສປປ ລາວ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ;

5. ກັກຕົວ, ດຳເນີນການສອບຖາມເອົາ ຂໍ້ມູນ ຫຼັກຖານເບື້ອງຕົ້ນ ພາຍໃນ ຊາວສີ່ ຊົ່ວໂມງ ພ້ອມທັງລາຍງານ ແລະ ສົ່ງໃຫ້ການຈັດຕັ້ງຂັ້ນເທິງທັດຕົນ ເພື່ອແກ້ໄຂຕາມລະບຽບການ;

6. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ;

7. ສະຫຼຸບ, ສັງລວມ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ການປັບໃໝ ແລະ ມາດຕະການອື່ນ ກ່ຽວກັບ ການເຂົ້າ-ອອກ ສປປ ລາວ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 36 ຄວາມຮັບຜິດຊອບຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ**

ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ອຸດສາຫະກຳ ແລະ ການຄ້າ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບໃຫ້ການ ຮ່ວມມື, ຕິດຕາມ ກວດກາ, ສະໜອງຂໍ້ມູນ ແລະ ປະສານສົມທົບກັບ ຂະແໜງການປ້ອງກັນຄວາມສະຫງົບ ກ່ຽວກັບ ການລະເມີດ ກົດໝາຍ ແລະ ລະບຽບການ ເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ. ສ່ວນການນຳໃຊ້ມາດຕະການຕໍ່ຜູ້ລະເມີດ ແມ່ນຄວາມຮັບຜິດຊອບຂອງກະຊວງປ້ອງກັນຄວາມສະຫງົບ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

## ໝວດທີ 5
## ການຄຸ້ມຄອງ ແລະ ນຳໃຊ້ເງິນ ທີ່ໄດ້ຈາກການປັບໃໝ

**ມາດຕາ 37 ການຄຸ້ມຄອງ ແລະ ການນຳໃຊ້ເງິນ ທີ່ໄດ້ຈາກການປັບໃໝ**

ເງິນປັບໃໝທັງໝົດ ທີ່ເກັບໄດ້ຈາກການລະເມີດດຳລັດສະບັບນີ້ ໃຫ້ມອບເຂົ້າງົບປະມານແຫ່ງລັດ. ສ່ວນງົບປະມານທີ່ນຳໃຊ້ເຂົ້າໃນວຽກງານ ການເຂົ້າ-ອອກ ແລະ ການຄຸ້ມຄອງ ຄົນຕ່າງປະເທດ ຢູ່ ສປປ ລາວ ແມ່ນນຳໃຊ້ງົບປະມານແຫ່ງລັດ ແລະ ແຫຼ່ງອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 38 ເປົ້າໝາຍການນຳໃຊ້ງົບປະມານ**

ເປົ້າໝາຍນຳໃຊ້ງົບປະມານເຂົ້າໃນວຽກງານ ການເຂົ້າ-ອອກ ແລະ ການຄຸ້ມຄອງ ຄົນຕ່າງປະເທດ ຢູ່ ສປປ ລາວ ມີວຽກງານຕົ້ນຕໍ ດັ່ງນີ້:

1. ຈັດຝຶກອົບຮົມ, ໂຄສະນາ, ເຜີຍແຜ່ກົດໝາຍ, ດຳລັດສະບັບນີ້ ແລະ ລະບຽບການອື່ນ ກ່ຽວກັບ ການລະເມີດ ການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ;

2. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ກົດໝາຍ, ດຳລັດສະບັບນີ້ ແລະ ລະບຽບການອື່ນ ກ່ຽວກັບການລະເມີດ ການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ;

3. ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ນາຍ ແລະ ພົນຕຳຫຼວດ ທີ່ເຮັດວຽກ ກ່ຽວກັບ ການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ;

4. ນຳໃຊ້ເຂົ້າໃນວຽກງານ ຄຸ້ມຄອງ ແລະ ຈັດສົ່ງ ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ອອກຈາກ ສປປ ລາວ;

5. ຈັດຊື້ ວັດຖຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ກ່ຽວກັບ ການເຂົ້າ-ອອກ ແລະ ການຄຸ້ມຄອງ ຄົນຕ່າງປະເທດ ຢູ່ ສປປ ລາວ;

6. ວຽກງານອື່ນ ກ່ຽວກັບ ການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 39 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້ ໂດຍປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 40 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບ ດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ